# ການເມືອງ,ການປົກຄອງຕ້ອງມີສາສນາ

ນັບຕັ້ງແຕ່ສມັຍພຣະເຈົ້າຟ້າງຸ່ມມະຫາຣາຊ -ປະເທດລາວເຮົາໄດ້ນັບຖືສາສນາພຸທ ໂດຍການ ຮັບເອົາມູນມໍຣະດົກອັນລ້ຳຄ່າຈາກພຣະເຈົ້າມະຫາຊີວິດແຫ່ງປະເທດພີ່ນ້ອງໃກ້ຄຽງຄືປະເທດ ຂເມນ ທີ່ມີຄວາມຜູກສຳພັນທະໄມຕຣີກັນດີຕຣອດມາຊຶ່ງແມ່ນສາສນາພຸທທີ່ເຕັມໄປດ້ວຍຄວາມ ອຸດົມສົມບູນຮ່າງມີມາດຖານວິທະຍາສາດແລະປັນຍາໃນການຄອບຄອງຊີວິດເພື່ອໃຫ້ພົ້ນອອກ ຈາກທຸກດັ່ງນັ້ນພວກເຮົາຄວນຄຳນຶງເຖິງບັນພະບຸຣຸດທີ່ຮັກສາຊາດສືບທອດມາເຖິງປະຈຸບັນ ດ້ວຍການຄົ້ນຄວ້າຈິດໃຈແຫ່ງຄວາມໝາຍຖ້ອຍຄຳ ອັນເປັນຄຳສັ່ງສອນຂອງພຣະສັມມາສັມ ພຸທເຈົ້າໃຫ້ເຂົ້າໃຈແລ້ວນຳເອົາໄປປະຕິບັດໃນຊີວິດປະຈຳວັນ ເພື່ອໃຫ້ຄອບຄົວຢູ່ດີກິນດີ ເພື່ອ ໃຫ້ສັງຄົມເຕັມໄປດ້ວຍຄວາມຊົມຊື່ນເພື່ອໃຫ້ປະເທດຊາດກ້າວອອກຈາກຄວາມວົ້ນວາຍ ທີ່ ຝາກຄວາມຫວັງໄວ້ແຕ່ນຳຜູ້ອື່ນຫຼືສິ່ງອື່ນຊຶ່ງຮູ້ກັນທົ່ວໄປວ່າສິ່ງສັກສິດ ນັ້ນເອງ -ດັ່ງນັ້ນເພື່ອ ເສີມສ້າງໃຫ້ໝົດທຸກຄົນໃນຊາດໄດ້ອອກຈາກຄວາມມືດມົວ ອອກຈາກຄວາມຢ້ານກົວອອກ ຈາກຄວາມ ລັ່ງເລ -ອອກຈາກຄວາມອອ່ນແອ,ສາສນາພຸທແມ່ນສາສນາປະຈຳຊາຕລາວເຮົາ ພວກເຮົາຕ້ອງສ້າງຕັ້ງສະຖາບັນຊັ້ນ ສູງ -ໃນການຄົ້ນຄວ້າ ຫາຫລັກສາສນາຈາກຕຳລາທີ່ເປັນ ເຄົ້າມູນແລ້ວມາແປພິມເຜີຍແຜ່ໃຫ້ເປັນຄູ່ມືຂອງປະຊາຊົນແລ້ວນຳໄປຮຽນຮູ້ຄຳສອນຂອງ ສາສນາພຸທພວກເຮົາຕ້ອງຈັດຕັ້ງໃຫ້ມີການສ້າງນັກປາທະຄາຖາ ທັມມະຂື້ນໃຫ້ຫລາຍເພື່ອ ຂຍາຍຫລັກທັມມະໃຫ້ກວ້າງຂວ້າງອອກໄປ -ແລ້ວຕ້ອງສົ່ງເສີມແລະສ້າງຕັ້ງໃຫ້ມີໂຮງຮຽນ ສົງໃນການຄົ້ນຄວ້າຫາຫລັກທັມຂອງພຣະພຸທເຈົ້າຈະແມ່ນຂໍ້ຄວາມຄຳ ສູດມົນໃຫ້ແປອອກ ເປັນພາສາລາວເພື່ອໃຫ້ມີຄວາມກ້າຫານໃນການປະເຊີນຫນ້າ ກັບບັນຫາຕ່າງໆດ້ວຍຄວາມ ສລຽວສລາດສວນນັກບວດຈະຕ້ອງເປັນຜູ້ບວດເພື່ອປະສົງການສແວງຫາຫລັກທັມເພື່ອລົດ ຣະກິເດດຕັນຫາແລະຕ້ອງມີຈຸດແນ່ວແນ່ໃນການຊອກຫາດ້ວຍຄວາມສລຽວສລາດຈາກ ພຸທສາສນາແລ້ວພະຍາຍາມລົບລ້າງພິທີການ -ອັນເປັນການຊີ້ນເປືອງແລະໄຮ່ປະໂຍດອັນ ເຮັດໃຫ້ຊາວພຸທເກີດຄວາມຫລົງໃຫລໃນສິ່ງນັ້ນໆ -ພຣະທັມຄຳສອນຂອງພຣະສັມມາສັມພຸທ ເຈົ້າ -ໃນໜ້າທີ່ຂອງແຕ່ຣະຄົນ ຫຼື ພໍ່ແມ່ລູກແລະຜູ້ປົກຄອງແຕ່ຣະຂັ້ນໃຫ້ເປັນຜູ້ຮູ້ຜູ້ຕື່ນໃນການ ປະຕິບັດໜ້າທີ່ ແລະມີຄວາມເສັຽສະຣະຜົນປະໂຍດສວ່ນຕົວເພື່ອຮັບໄຊ້ຊາດຮັບໄຊ້ໜ້າທີ່ໃນ ຄວາມຢູ່ລອດຂອງຊາດລາວເຮົາໃຫ້ສົມບູນກັບວ່າຊາວພຸທລາວແລ້ວໃຫ້ເອົາຫລັກທັມມະເຂົ້າ ໃນຫລັກສູດໃນການສຶກສາ ນັບຕັ້ງແຕ່ອະນຸບານ ຈົ່ນເຖິງມັດທະຍົມຕອນປາຍ ເພື່ອປຸກແນວຄິດໃຫ້ເປັນຜູ້ຕື່ນຕົວແລະເບີກບານໃນ ການສຶກສາຮ່ຳຮຽນເພື່ອກູ້ມຕົນເອງ

ໃນທຸກແງ່ທຸກກໍຣະນີໃຫ້ເປັນຜູ້ຂຍັນໝັ້ນພຽນໃນການສຶກສາແລະມັກອອກແຮງງານແລ້ວ ປະຢັດມັດທະຍັດເປັນຕົ້ນຣະບຽບຫຼືກົດໝາຍກໍ່ຕອ້ງໄດ້ຄັດອອກຈາກພຣະໄຕປີດົກສວ່ນ ປະຊາຊົນລາວທຸກຄົນຕອ້ງມີຄວາມຮັບຮູ້ແລະເຂົ້າໃຈວ່າບາບບູນນັ້ນແມ່ນຫຍັງ-ສວັນ ແມ່ນອັນໃດແລະຢູ່ໃສພຣະນິພານແມ່ນຫຍັງແລະຢູ່ບອ່ນໃດ -ທາງພັກປະຊາຊົນລາວອິສຣະ ຖາ້ເປັນຣັຖບານຈະຕອ້ງເຫັນຄວາມສຳຄັນຂອງພຸທສາສນາໃນການອູ້ມຊູດວ້ຽການຊວ່ຽ ເຫລືອທາງດາ້ນການຄຸ້ມກັນແລະການໃຫ້ທຶນໃນການສຶກສາເພື່ອຂຍາຍການຮາ່ຮຽນໃຫ້ ຊາວພຸທຕື່ນຕົວແລະຊວ່ຽຕົນເອງເພື່ອອອກຈາກທຸກຢາ່ງຮອບດາ້ນແລະເພື່ອເຮັດໃຫ້ຄົນ ເຮົາ-ອອກຈາກຄວາມງົມງາຍ ທີ່ພາ່ນມານັ້ນພວກເຮົາກໍ່ຕອ້ງເອົາໃຈໃສ່ເຮັດວຽກຮວ່ມ ມືກັນກັບທາງວັດທຸກໆແຫ່ງ-ອຳນາດການປົກຄອງຕາ່ງໆ ກໍ່ຕອ້ງຊວ່ຽແຮງຫຼືມີຄວາມຄິດ ຈິດໃຈເຂົ້າໃນການພັທນາສັງຄົມໃໝ່ໃຫ້ກາ້ວໜ້າຕໍ່ໆໄປໃນການດຳລົງຊີວິດເພື່ອອອກຈາກ ຄວາມຫລົງຕາ່ງໆແລ້ວຫັນໜ້າເຂົ້າມາຫາກັນເພື່ອຄວາມຖືກຕອ້ງປອງດອງຊາດທັງຜູ້ ສະດາດແລະເປັນທັມ ສວ່ນສັງຄົມໃໝ່ຈະກາ້ວໜ້າແລະມີຄວາມຮັກຊາດຮັກບັນພຣະບຸຣຸດ ທີ່ເພີ່ນໄດ້ຮັກສາຊາດສາສນາມາໃຫ້ພວກເຮົາເທົ້າທຸກວັນນີ້ ພວກເຮົາກໍ່ຕອ້ງອາໄສໝົດ ທຸກຄົນໃນຊາດ ຕອ້ງຫັນຫນ້າເຂົ້າຫາກັນ ດວ້ຽ ການສຶກສາແລະຄົ້ນຄວ້າຫລັກຄວາມຈິງ ໃຫ້ຖືກຕອ້ງແລະເປັນທັມເພື່ອຄໍ້າຊູປະເທດຊາດແລະສາ້ງອະນຸຊົນຜູ້ທີ່ຈະສືບທອດມໍຣະ ດົກຕໍ່ໄປໃຫ້ມີຄວາມ ສລຽວສລາດໃນການປົກຄອງແລະການຄອງຊີວິດຢາ່ງຢູ່ເຢັນເປັນ ສຸກແລະໝັ້ນຄົງຄະນົງແນ່ນໃຫ້ແກ່ປະເທດຊາດບາ້ນເມືອງ

## ການສຶກສາ

ຄວາມສີວິໄລຈະກາ້ວໜ້າແລະວັທນາຖາວອນ ຂອງສັງຄົມມະນຸດແລະຂອງ ປະເທດຊາດ ຂອງກຸ່ມແລະຂອງບຸກຄົນຈົ່ນເຖິງປະຊາທິປະໄຕສິດເສຣີພາບ ແລະຄວາມເປັນທັມຈະປະ ກົດເປັນຄວາມຈິງໄດ້ກໍ່ຕອ້ງອາໄສການສຶກສາ ດັ່ງນັ້ນທາງພັກປະຊາຊົນລາວອິສຣະຈຶ່ງ ປຽບໄດ້ວ່າການສຶກສາແມ່ນໝາກຫົວໃຈຂອງການຕໍ່ສູ້ເພື່ອເອກຣາຊແລະປະຊາທິປະໄຕ ອັນແທ້ຈິງ-ການສຶກສາແມ່ນໝາກຫົວໃຈຂອງການພັທນາເສຖກິດເພື່ອຄວາມກາ້ວໜ້າ ທາງດາ້ນເຕັກນິກແລະວິທະຍາສາດ -ສວ່ນການສຶກສາເປັນບໍເກີດແຫ່ງຄວາມສີວິໄລທາງ ດາ້ນຈາຣິຍະທັມ ວັທນະທັມສັງຄົມແລະຄວາມໝັ້ນຄົງ-ສ່ວນພາສາທາງຣາຊການຕອ້ງ ແມ່ນພາສາລາວໄຊ້ທົ່ວປະເທດແລະຕອ້ງປະຕິຣູບ ຫລັກສູດແຕ່ຣະຂັ້ນຂອງຣະບົບການ ສຶກສາໃຫ້ເໝາະສົມກັບສະພາບຕົວຈິງຂອງຄວາມຮຽກຮອ້ງຕອ້ງການຂອງການພັທນາ ປະເທດ ພວກເຮົາຮັບປະກັນໃຫ້ຊາວ ໜຸ່ມລາວທຸກຄົນທີ່ມີຄວາມສລຽວສລາດໃຫ້ໄດ້

ເຂົ້າຮຽນໃນຊັ້ນສູງແລ້ວສ້າງຕັ້ງສະຖາບັນການສຶກສາຊັ້ນສູງແລະຂແນງວິຊາສະເພາະຕ່າງໆແລ້ວນຳເອົາຫລັກທັມມະ ປະຊາທິປະໄຕເຂົ້າໃນຫລັກສູດແລະເດີ້ມຕົ້ນແຕ່ຊັ້ນປະຖົມຈົ່ນຮອດຈົບມັທຍົມຕອນຕົ້ນ -ສ່ວນຄູອາຈານຕອ້ງເປັນຕົວຢ່າງໃນການປະຕິບັດຕົນໃຫ້ສົມກັບວ່າເປັນແມ່ພິມຂອງຊາດໃນທຸກໆດ້ານນັບແຕ່ມັທຍົມຕອນປາຽຈົນເຖິງວິທະຍາໄລຈະຕອ້ງແບ່ງທິດທາງແລະນັກສຶກສາເລືອກອາຊີບໃນຄວາມສາມາດທາງດ້ານການສຶກສາຂອງຕົນແລ້ວຈັດຫລັກສູດແຕ່ຣະຂແນງວິຊາສະເພາະແລ້ວເລືອກເອົາຄະແນນວິຊາມາປະສົມປະສານການວາງແຜນ -ການສຶກສາກັບການພັທນາແນວຄິດຮັກຊາດ ຮັກປະຊາທິປະໄຕ ຮັກວັທນະທັມຂອງລາວແລະການພັທນາເສຖກິດຂອງຊາດ -ພວກເຮົາຕອ້ງສ້າງຕັ້ງ ໂຮງຮຽນໃຫ້ເປັນບອ່ນສ້າງສັງຄົມໃໝ່ທີ່ເປັນທັມແລະໄດ້ຮູ້ສິດທິເສຣີປະຊາທິປະໄຕແລ້ວໃຫ້ຮູ້ຈັກຊວ່ຽຕົນເອງໃຫ້ເປັນຜູ້ຮູ້ຜູ້ຕື່ນແລະໃຫ້ມີຄວາມເບີກບານ -ພວກເຮົາຈະຕອ້ງໃຫ້ຄວາມສຳຄັນໃນການສ້າງນັກວິຊາສະເພາະອັນເປັນອາຊີບຖາວອນແລະສອດຄອ່ງກັບສະພາບຕົວຈິງຂອງປະເທດເພື່ອສົ່ງເສີມການສິດສອນວິທະຍາການທາງດ້ານວິທະຍາສາດຊັ້ນສູງແລະສ້າງຕັ້ງຫລັກການ ການປາກເວົ້າການຂີດຂຽນພາສາໃຫ້ຖືກຕາມຄວາມໝາຽໃຫ້ຄອ່ງແຄ້ວແລະຖືກສຳນວນແລະຈະຕອ້ງສິທສອນພົງສາວະດານລາວແທ້ໆທີ່ມີເຄົ້າມູນອັນແທ້ຈິ່ງ -ການວິວັທນາການຂອງສັງຄົມລາວເພື່ອດັດແປງແກ້ໄຂຄວາມຜິດພາດໃນອາດີດບໍ່ໃຫ້ ເກີດມີໃນອານາຄົດຊຶ່ງເປັນການກະຕຽມອານາຄົດຂອງຊາດໃຫ້ເຫັນຄວາມສຳຄັນໃນການກໍ່ສ້າງສາສດາຈານ ເພື່ອສ້າງນັກວິຊາສະເພາະອັນມີຄວາມສາມາດໃນ ທຸກໆຂແນງແລ້ວຈັດຕັ້ງໃຫ້ມີຄະນະທີ່ປຶກສາຂອງ ໂຮງຮຽນທຸກໆແຫ່ງທີ່ມີ ສິດຕັດສິນ ການຈັດຣະບຽບທາງດ້ານວິຊາຄູຣແລະການປົກຄອງຂອງ ໂຮງຮຽນເພື່ອແນ່ໃສ່ການແບ່ງເຂດພັທນາທາງດ້ານສິດສອນຊຶ່ງມີອົງປະກອບດັ່ງນີ້

ກ, ໃນຣະຫລັບຊັ້ນປະຖົມແມ່ນປະກອບດວ້ຽຜູ້ຖືກເລືອກມາຈາກ, ພໍ່ແມ່ນັກຮຽນຄຣູອາຈານແລະຫົວໜາ້ ໂຮງຮຽນຫຼືຜູ້ຕາ່ງໜາ້ໃຫ້ມີສຽງເທົ່າທຽບກັນ ໃນຣະບົບມັທຍົມປະກອບດວ້ຽຜູ້ຕາ່ງໜາ້ແລະພໍ່ແມ່ນັກຮຽນທີ່ຖືກເລືອກຕັ້ງມາ ຈາກນັກຮຽນແລະຫົວໜ້າ ໂຮງຮຽນຫຼືຜູ້ຕາ່ງໜ້າໃຫ້ມີສຽງເທົ້າທຽບກັນແລ້ວຈັດແບ່ງເຂດການຈັດຕັ້ງທີ່ປຶກສາ ໃນການສຶກສາຢ່າງຖືກຕອ້ງຕາມກົດໝາຽ ທີ່ມີສິດຕັດສິນຕາມເຂດຂອງຕົນແລ້ວຕອ້ງປະສານງານກັບກະຊວງສຶກສາ

ຂ,ຕ້ອງສ້າງຕັ້ງອົງການພັທນາສຶກສາແລະວັທນະທັມລວມໃຫ້ມີໜ້າທີ່ຮັບຜິດຊອບທົ່ວປະເທດໃນດ້ານຫລັກສູດວິຊາການວິຊາຄຣູແລະການວາງທິດທາງໃຫ້ຄວາມສໍາຄັນໃນການເຂົ້າຮ່ວມຂອງອົງການຈັດຕັ້ງແລະບໍຣິສັດທີ່ສົນໃຈຂໍສເນີຄວາມຮຽກຮ້ອງຕ້ອງການແຮງງານເພື່ອຈະໄດ້ສ້າງວິຊາສະເພາະໃຫ້ເໝາະສົມກັບຄວາມຕ້ອງການແຮງງານແລ້ວພັທນາໃນການສິດສອນທາງດ້ານວິຊາການ  ໂດຍການຂຍາຍເປັນມະຫາວິທະຍາໄລໃນທຸກດ້ານເພື່ອກໍ່ສ້າງນັກວິຊະອະກອນທີ່ປະກອບດ້ວຍຄວາມສາມາດ

ຄ,ຊາວໜຸ່ມທຸກໆຄົນກ່ອນຈະຮຽນປະກອບອາຊີບຕ້ອງຈົບມັດທະຍົມຢ່າງນ້ອຍພາກຕົ້ນຫຼືອີງຕາມເງື່ອນໄຂວິຊາສະເພາະແລະທຸກໆຄົນກໍ່ຕ້ອງໃຫ້ຈົບ ໂຮງຮຽນປະຖົມ

ງ,ຕໍ່ສູ້ການລົບລ້າງການກຶກໜັງສືແລະຫລັກສູດແຕ່ຣະບົບຊັ້ນຕ້ອງໃຫ້ເປັນແບບສາກົນເພື່ອໃຫ້ປະເທດເຮົາມີຄວາມສາມາດທາງດ້ານຄວາມຮັບຮູ້ໃນການສຶກສາສູງແລ້ວມອງເຫັນອານາຄົດອັນໄກຂອງປະເທດຊາດແລະອະນຸຊົນທີ່ຈະສືບທອດນໍຣະດົກຕໍ່ໄປປະຊາຊົນລາວພວກເຮົາໃນທຸກຊົນຊັ້ນຊົນຊາດຊົນເຜົ່າແລະທຸກເພດທຸກໄວຈໍາຕ້ອງປະສົບຕໍ່ວຽກໃຫ່ຍແລະໜັກໜ້າໂດຍອາໃສຄວາມຮ່ວມມືຮ່ວມໃຈແລະຮ່ວມສະຕິປັນຍາແລ້ວພາກັນຊອກສແວງຫາຄວາມຮູ້ແລະລົບລ້າງການກຶກໜັງສືໃຫ້ຊີ້ນໄປ ກໍ່ຕ້ອງອາໃສທຸກໆຄົນໃນຊາດໃຫ້ຄວາມສົນໃຈເຫັນແກ່ຄວາມຢູ່ລອດຂອງຊາດເຫັນແກ່ຄວາມກ້າວໜ້າແລະຄວາມຢູ່ດີກິນດີຂອງປະຊາຊົນລາວແລ້ວທຸກໆຄົນຕ້ອງອອກແຮງກາຍແຮງໃຈແຮງສະຕິປັນຍາເພື່ອຮັບໄຊ້ຜົນປະ ໂຍດຂອງຊາດໃຫ້ສົມກັບວ່າເປັນຕົວແທນປະຊາຊົນແລະໃຫ້ຄວາມໄວ້ວາງໃຈ
ທີ່ປະຊາຊົນຝັງໃຈໄວ້ກັບທຸກໆທ່ານ

## <u>ໂຄງການພັດທະນາທ້ອງຖິ່ນ</u>

ປະຊາຊົນສ່ວນຫລາຍແມ່ນອາໃສຢູ່ຕາມຊົນນະບົດ -ແຄມແມ່ນໍ້າແລະເຂດພູດອຍ ຮ່ອມພູຫຼືທົ່ງພຽງນອກນັ້ນແມ່ນອາໃສຢູ່ຕົວເມືອງນ້ອຍໃຫ່ຍ ໂດຍສະເພາະຈໍານວນທີ່ຢູ່ນອກຍັງບໍ່ທັນໄດ້ເຂົ້າຮ່ວມໃນການພັທນາເສຖກິດແລະຫ່າງໄກຈາກການດູແລເບິ່ງແຍງຄວາມອຸປຖັມຄໍ້າຊູທາງດ້ານຄວາມຮູ້ ທາງດ້ານວິຊາການສາທາຣະນະສຸກຄົມມະນາຄົມແລະຂ່າວສານຕ່າງໆຈາກອົງການປົກຄອງເທົ່າທີ່ຈໍາເປັນ

1-ຕ້ອງເປີດກວ້າງເພື່ອໃຫ້ຕົວແທນຂອງທ້ອງຖິ່ນໄດ້ເຂົ້າຮ່ວມໃນການ
ສຶກສາຄົ້ນຄົ້ວແລະວາງແຜນໃນ ໂຄງການພັທນາເສຖກິດ
ເພື່ອໄດ້ຈໍາແນກແລະແບ່ງເຂດຕາມ

ຄວາມເໝາະສົມໃນການພັທນາເສຖກິດແກ່ຣະທອ້ງຖິ່ນນັ້ນ ຕອ້ງໃຫ້ຄວາມອູ້ມຊູ
ແລະສົ່ງເສີມໃຫ້ມີການປະຕິບັດຕົວຈິງເພື່ອໃຫ້ເກີດໝາກຜົນຍິ່ງຂື້ນ
2-ຕອ້ງຮັບຮູ້ອົງການພັທນາເສຖກິດຂອງຕົວເມືອງ ໃຫ້ເປັນຫົວຈັກຫລັກແຫລ່ງຂອງ
ການເຄື່ອນໄຫວເພື່ອໃຫ້ຂຍາຍຕົວອອກໄປສູ່ເຂດຕາ່ງ ໆ ທີ່ໄດ້ຈຳແນກມາແລ້ວ
3-ເຮັດໃຫ້ການພັທນາເສຖກິດດັ່ງກາ່ວນີ້ ເຂົ້າຢູ່ໃນຮູບການທີ່ໄດ້ຈັດສັນແລ້ວນັ້ນ
ໃຫ້ເໝືອນການພັທນາຕົວເມືອງ
4-ຕອ້ງເຫັນຄວາມສຳຄັນ ໂດຽໃຫ້ການອູ້ມຊູສົ່ງເສີມໃນເຂດທີ່ດວັຽພັທນາ ໂດຽອີງໃສເຂດ
ສົມບູນ ທີ່ມີທຶນຊັບພຽງພໍ ເພື່ອຈະອຳນວຽຄວາມສະດວກໃນການເຕີບໃຫ່ຽຂຍາຍຕົວ
5-ຕອ້ງນຳເອົານະ ໂຍບາຽການປົກຄອງເຂົ້າໄປໃກ້ຊິດເພື່ອໃຫ້ປະຊາຊົນໄດ້ມີສວ່ນຮັບ
ຜິດຊອບແລະຮັບຮູ້ເຂົ້າໃຈສິດເສຣີພາບຂອງເອົາເຈົ້າແລ້ວໄດ້ເຂົ້າຣວ່ມໃນການ
ພັທນາເສຖກິດ-ຣັຖບານຕອ້ງເພີ້ມການລົງທຶນໃຫ້ຫລາຽຂື້ນໃນທອ້ງຖິ່ນແລະໃຫ້ເຫັນ
ຄວາມສຳຄັນໃນການສາ້ງຕັ້ງອຸດສາຫະກັມເພື່ອຮັບການລັບໄຊ້ຂແນງການຕາ່ງໆ
6-ເຮັດໃຫ້ຕົວເມືອງໃຫ່ຽໆທີ່ມີຊາຽແດນຕິດກັບຕາ່ງປະເທດເປັນປະຕູທາງເຂົ້າອອກ
ທາງດາ້ນເສຖກິດແລະປຽ່ນການຄາ້ຣະວາ່ງປະເທດ ໂດຽຄວບຄູມຢາ່ງເຂັ້ມງວດ
ໃຫ້ຖືກຕອ້ງຕາມຣະບຽບກົດໝາຽການຄາ້ຣະວາ່ງປະເທດ
7-ຕອ້ງສົ່ງເສີມຊາວຊົນນະບົດໃນການສາ້ງແນວຄິດແລະຫລັກການພັທນາເສຖກິດ
ທອ້ງຖິ່ນໃຫ້ປະກົດເປັນຈິງໄດ້ກໍ່ຕອ້ງອາໃສປະຊາຊົນທຸກຊົນຊັ້ນຊົນຊາດຊົນເຜົ່າໄດ້
ເອົາໃຈໃສ່ປະຕິບັດໜ້າທີ່ຂອງຕົນທີ່ໄດ້ຖືກມອບໝາຽນັ້ນດວັຽຄວາມຊື່ສັດຈົ່ງຮັກ
ພັກດີຕໍ່ໜ້າທີ່ຕອ້ງມີຄວາມພະຍາຍາມອົດທົນເພັນແກ່ຊາດແກ່ອະນຸຊົນຕໍ່ໆໄປ

<u>ໂຄງການກະເສດປູກຝັງແລະລຽ້ງສັດ</u>

ປະເທດລາວແມ່ນພູມສະຖານທີ່ເໝາະສົມກັບການກະເສດເນື່ອງດວັຽເນື້ອທີ່ແລະ
ດິນຟາ້ອາກາດອຳນວຽ ແຕ່ວາ່ປະເທດເຮົາຍັງຂາດວິຊາການແລະອຸປກອນ
ຮັບໄຊ້ແນວຄິດກຸ້ມຕົນເອງຖືເປົາການກະເສດ ໂດຽບໍ່ຄົ້ນຄ້ວຫາວິຊາການອັນ
ທັນສມັຍເພາະສະນັ້ນປະຊາຊົນລາວຈຶ່ງຕົກຢູ່ໃນສະພາບຂາດແຄ້ນອຶດຢາກ
ຈົ່ນບໍ່ສາມາດຈະເອົາຕົວລອດໄດ້
ກ,ຕອ້ງໃຫ້ຄວາມສຳຄັນແກ່ຊາວກະສິກອນທີ່ຈະສາ້ງຕັ້ງການກະເສດທີ່ໄດ້ຜົນກຸ້ມຄາ່
ຂ,ເພື່ອສົ່ງເສີມໃຫ້ການຜຣິດພາຽໃນປະເທດໄດ້ກາ້ວໜ້າແລະຂຍາຍຕົວຕອ້ງປອ້ງ
ກັນບໍ່ໃຫ້ມີການແຊກແຊງ ການກະເສດພາຽອອກ

ຄ,ຕອ້ງສົ່ງເສີມໃນການລົງທຶນແລະສ້າງຕັ້ງອົງການສະຫາກອນກະເສດ

ງ,ຕອ້ງຈັດຕັ້ງການພັທນາກະເສດໃຫ້ຖືກກັບໃນໂຄງການຂອງອົງການ
ຈັດຕັ້ງຂອງອົງການກະເສດ ຕາມແຜນການລວມ

1-ຕອ້ງໃຫ້ຄວາມສໍາຄັນ ຂອງການພັທນາເຂດ

2-ຕອ້ງຈັດການໝູນໄຊ້ຜົນຜລິດທຸກໆຢ່າງໃຫ້ເປັນປະໂຍດ

3-ໝູນ ໄຊ້ເນື້ອທີ່ຕາມແຜນການທີ່ໄດ້ຈັດສັນ

4-ອົງການຈັດຕັ້ງການກະເສດ ຕອ້ງປະກອບອຸປກອນທີ່ຈໍາເປັນ
ໃນການຄົ້ນຄ້ົວດ້ານ ວິທະຍາສາດ

5-ໃຫ້ເຫັນຄວາມສໍາຄັນໃນການກໍ່ສ້າງ ເໝືອງຝາຍ

6-ສ້າງຕັ້ງໃຫ້ມີໂຮງຮຽນ ຫລັກສູດການກະເສດແລ້ວ
ໃຫ້ຮັບຮູ້ນັກການກະເສດຕະສາດ ທີ່ສໍາເຣັດການສຶກສາ

7-ໃຫ້ການອູມ້ຊູແລະຊວ່ຽເຫລືອແກ່ບໍຣິສັດທີ່ຜລິດເຄື່ອງມືຮັບໄຊ້ການກະເສດ
ທາງພັກປະຊາຊົນລາວອິສຣະຂອງພວກເຮົາໄດ້ມີໂຄງການແລະແຜນການ
ການກະເສດຢ່າງຣະອຽດເພື່ອໃຫ້ໂຄງການສໍາເຣັດຜົນກໍ່ຕອ້ງອາໃສປະຊາ
ຊົນໃຫ້ຄວາມຮວ່ມມືແລະການສນັບສນູນໃນການກະເສດຕໍ່ໄປ

<u>ເວົ້າເຖິງຊັພຍາກອນທັມຊາດ</u>

ຣັຖບານຕອ້ງຈັດຕັ້ງອົງການ ສຶກສາຄົ້ນຄ້ົວແລະວາງແຜນປະເມີນຄຸນຄ່າ
ຊັພຍາກອນທັມຊາຕຂອງປະເທດແລ້ວຈັດຕັ້ງນວ່ຽດໍາເນີນ
ງານໃນການຄວບຄຸມຕ່າງໆ ມີດັ່ງນີ້

1,ຕອ້ງອອກກົດໝາຽຄວບຄຸມຣະບົບການຕັດໄມ້ແບບອຸດສາຫະກັມການຄ້າ
ເພື້ອດີກເວັ້ນການທໍາລາຽປ່າໄມ້ທີ່ຢູ່ອາໃສຂອງສັດປ່າອັນເປັນສາຽເຫດ
ໃຫ້ເກີດນ້ໍາຖວ້ມແລະຝົນແຫ້ງແລ້ງ

2,ທາງພັກປະຊາຊົນລາວອິສຣະພວກເຮົາຕອ້ງສົ່ງເສີມທາງດ້ານວິຊາການ ເພື່ອຈັດ
ຕັ້ງການປູກຕົ້ນໄມ້ທົດແທນຢ່າງສມ່ໍສເມີແລະເຮັດໃຫ້ທຸກອົງການ ຂອງຣັຖແລະຂອງ
ເອກຊົນເພື່ອໄຫ້ປະຊາຊົນທຸກໆຄົນເຂົ້າໃຈໃນຄວາມສໍາຄັນ ຂອງປ່າໄມ້ແລ້ວນໍາເອົາ
ຄວາມສໍາຄັນຂອງປ່າໄມ້ເຂົ້າໃນຫລັກສູດຂອງການ ສຶກສາຕາມຂັ້ນຕອນແລະຣະຫລັບ
ຣັຖບານຕອ້ງເກືອດຫ້າມໃນການທໍາລາຽປ່າໄມ້ແບບກະແຈກ
ກະຈາຽແລະຕາມຊອບໃຈຂອງໃຜມັນ

3,ຕອ້ງຈັດຣະບົບການສົ່ງແລະປອ່ນໄມ້ສຳເຣັດຮູບ -ໄມ້ຖອ່ນເຂົ້າໂຮງງານ ຜລິດຕາມ
ຄວາມຕອ້ງການຂອງອຸດສາຫະກັມແລະຈັດຣະບົບຄວບຄຸມຈຳໜາ່ຽເພື່ອໃຫ້ປະຊາຊົນ
ທຸກຖວັນໜ້າໄດ້ຮັບການຊົມໄຊ້ຕາມຄວາມຕອ້ງການແລະມີການຄວບຄຸມຣາຄາຈຳ
ໜາ່ຽໄມ້ສຳເຣັດຮູບແລະໄມ້ແປຮູບໃຫ້ສົມດຸ້ນກັບຄາ່ການຜລິດ ແລ້ວສົ່ງເສີມການລົງ
ທຶນ ໂດຽກົງໃນການ ອຸດສາຫະກັມຜລິດເຄື່ອງອຸປໂພກຕາ່ງໆດວ້ຽໄມ້
4,ຈັດແບ່ງເຂດດວ້ຽການປະຕິຮູບປ່າໄມ້ໃຫ້ເປັນບອ່ນພັກພອ່ນທັມະຊາດກາງແຈ້ງ
ທີ່ພັກພາອາໃສຂອງສັດປ່າຕາ່ງໆເພື່ອບອ່ນສຶກສາຄົ້ນຄົ້ວທັມມະຊາດແລະວິທະຍາສາດ
5,ຕອ້ງອົບໂລມຊາວຊົນນະບົດແລະເຂດພູດອຽໃຫ້ທັນປຣັບຊີວິດແບບເກົ່າຕອ້ງກັບມາ
ໄຊ້ຊີວິດແບບທັນສມັຍ ໂດຽສາ້ງເງື່ອນໄຂໃຫ້ເຂົາເຈົ້າປຣັບແປງມີດັ່ງນີ້
ກ -ການດຳລົງຊີວິດ ແບບປະຖົມບູຮານ
ຂ -ເລືອກວິທີໃນການຊວ່ຽເຫລືອສິ່ງຂອງໃຫ້ເໝາະສົມກັບສະພາບຕົວຈິງຂອງເຂດ
ຄ -ຕອ້ງປຸກສາ້ງບາ້ນຕົວຢາ່ງໃຫ້ເຫາະສົມກັບທອ້ງຖິ່ນ
ງ -ຕອ້ງສົ່ງເສີມການດັດແປງຫັຖກັມແບບກະຈັດກະຈາຽໃຫ້ການຫັຖກັມໃນການຜລິດ
ຈ -ຣັຖ,ຣັຖວິສະຫະກິດແລະເອກຊົນ ຮັບຊື້ແລ້ວຊອກຕຣາດຈຳໜາ່ຽ
ເພື່ອສົ່ງເສີມການຫັຖກັມ
1,ໃນການສຶກສາຄົ້ນຄົ້ວແລ້ວວາງໂຄງການ -ການຄົ້ນຄວ້າບໍທາດຕາ່ງໆ
2,ຕອ້ງສຶກສາຄົ້ນຄວ້າການສາ້ງເໜືອງຝາຽ ແລະເຄື່ອງໄຟຟ້າເພື່ອແຈກຢາຽພະ
ລັງງານນ້ຳໃຫ້ພຽງພໍກັບຄວາມຕອ້ງການຂອງກະເສດແລະອຸດສະຫະກັມຕາ່ງໆ
3,ຕອ້ງໃຫ້ຄວາມສຳຄັນໃນການລົງທຶນແລະການຄົ້ນຄວ້າສິ່ງຂອງ ຕາ່ງໆເພື່ອນຳ
ມາໄຊ້ເປັນເສຖກິດຂອງຊາດ
4,ພວກເຮົາຕອ້ງເປີດກວ້າງແລະສົ່ງເສີມການລົງທຶນສາ້ງໂຮງງານ ອຸດສະຫະໄມ້ອັດໄມ້
ແຜ່ນແລ້ວຍັງມີໂຄງການແລະນະໂຍບາຽກຽ່ວກັບການຈັບຈອ່ງທີ່ດິນເຄຫະສະຖານມີດັ່ງນີ້
ກ -ເກບພາສີ ຕາດິນທີ່ບໍ່ໄດ້ພັທນາປຸກສາ້ງໃນອັດຕຣາສູງ
ຂ -ເກບພາສີຕາດິນ ບາ້ນເຮືອນຕາມເໝາະສົມ
ຄ -ຕອ້ງຈັດຕັ້ງການປຸກສາ້ງເຮືອນໃຫ້ເປັນຣະບຽບແລະຕອ້ງລົງທະບຽນບາ້ນ
ເຮືອນຕາມຫລັກສາກົນ ເພື່ອພັທນາຊີວິດການເປັນຢູ່ແລະຄວາມສະດວກສະບາຽ
ໃນການຄົມມະນາຄົມໄປສະນີເພື່ອດີກເວັ້ນອັກຄີໄພຕາ່ງໆ
ແລະອົງການຈັດຕັ້ງ

ເຂດເປັນຜູ້ອະນຸຍາດປຸກສ້າງບ້ານເຮືອນຕາມແຜນທີ່ທາງຄນະກັມມະການວາງໄວ້ແລະຕ້ອງແມ່ນບໍຣິສັດທີ່ຖືກຕ້ອງຕາມກົດໝາຍແຮງງານແລະຜູ້ທີ່ມີວິຊາສະເພາະປະກອບດ້ວຍວິຊາການດັ່ງກ່າວເທົ່ານັ້ນເປັນຜູ້ກໍ່ສ້າງບ້ານເຮືອນໄດ້

<u>ເວົ້າເຖິງຊົນຊັ້ນຊົນເຜົ່າຂອງລາວເຮົາ</u>

1-ຕ້ອງຮັບປະກັນຊົນຊັ້ນຊົນເຜົ່າຂອງລາວສ່ວນຫລາຍເປັນຊາດລວມຕ້ອງໃຫ້ຄວາມສະດວກແລະສົ່ງເສີມໃຫ້ທຸກຊົນຊັ້ນຊົນເຜົ່າໄດ້ເຂົ້າຮ່ວມໃນການບໍຣິຫານປະເທດ

2,ຕ້ອງສົ່ງເສີມຊົນຊັ້ນຊົນເຜົ່າຕ່າງໆ ໃຫ້ໄດ້ເຂົ້າຮັບການສຶກສາ-ດ້ວຍການສ້າງສາຍທາງຄົມມະນາຄົມ ໄປເຖິງຈຸດຕ່າງໆແລ້ວປັບປຸງເສີມສ້າງໂຄງການ ໃນການສຶກສາອານາໄມໃຫ້ເຖິງເຂດພູດອຍ ເພື່ອໃຫ້ເຂົາເຈົ້າຮູ້ຈັກໃນການດໍາລົງຊີວິດແບບທັນສມັຍແລ້ວຕ້ອງສ້າງໂຮງໝໍ ໂຮງຮຽນຕາມເຂດຊົນນະບົດທີ່ຫ່າງໄກຈາກຄວາມຈະເຣີນ ເພື່ອໃຫ້ອະນຸຊົນ ຂອງຊາວຊົນນະບົດຕ່າງໆໄດ້ຮັບການສຶກສາເພື່ອໃຫ້ກ້າວໜ້າ ແລະສະດວກໃນການປົກຄອງ

3,ຕ້ອງສົ່ງເສີມວັທນະທັມຂອງຊົນຊາດຕ່າງໆ ພ້ອມພັທນາພາສາຂອງຊົນຊາດນັ້ນໆແລ້ວເລືອກຫາສັບຕ່າງໆນໍາເຂົ້າໃຊ້ໃນພາສາລາວເພື່ອໃຫ້ພຽງພໍໃນການຊົມໃຊ້ແລະການຂີດຂຽນຫຼືບັນທຶກຕ່າງໆໃນຂໍ້ຄວາມແລະຈັດຣະບົບໃນການບໍຣິຫານຂອງຊົນຊັ້ນຊົນເຜົ່າໃຫ້ເຂົ້າກັບຣະບົບການປົກຄອງຂອງຊາດດ້ວຍຣະບອບປະຊາທິປະໄຕແລະຕ້ອງແບ່ງເຂດປົກຄອງໃຫ້ຣະອຽດແລ້ວຈັດຣະບົບການອູ້ມຊູທາງດ້ານວິຊາແລະການສ່ວຍເຫລືອໃນການລົງທຶນ

4,ຕ້ອງຈັດໃຫ້ມີຕົວແທນແທ້ໆຂອງຊົນຊັ້ນຊົນເຜົ່າຕ່າງໆດ້ວຍປະຊາທິປະໄຕອັນແທ້ຈິງແລ້ວເກັບກໍາສະຖິຕິຂອງປະຊາຊົນທຸກຊົນຊາດຊົນເຜົ່າ ເກັບກໍາສະຖິຕິການເກີດແລະການຕາຍແຕ່ຣະຄົນ

5,ຕ້ອງຈັດຣະບົບເຜີຍແຜ່ຫລັກປະຊາທິປະໄຕເປັນພິເສດໃຫ້ກັບຊົນຊັ້ນຊົນເຜົ່າເພື່ອດຶງດູດຈິດໃຈໃຫ້ເຂົາເຈົ້າໄດ້ຫັນມາສົນໃຈໃນການປົກຄອງຮ່ວມຂອງຊາດ

6 -ຕ້ອງສົ່ງເສີມພັທນາການພົວພັນຣະວ່າງຊົນຊັ້ນກັບຊົນຊັ້ນແລະຣະວ່າງພັກການເມືອງຫຼືຣັຖບານກັບຊົນຊັ້ນຊົນເຜົ່າ ໃຫ້ສມໍ່າສເມີດ້ວຍຣະບອບປະຊາທິ ປະໄຕແລະຕ້ອງອອກກົດໝາຍລົງໂທດພວກທີ່ສວຍໂອກາດໃຊ້ສິດສ່ວນຕົວ ໂດຍ ແອບອ້າງເອົາອໍານາດປະຊາທິປະໄຕຂົ່ມຂູ່ປະຊາຊົນແລ້ວຕ້ອງຈັດຕັ້ງໜ່ວຍສືບຣາຊການລັບກ່ຽວກັບພຶດຕິການຂອງຄົນບາງກຸ່ມທີ່ສວ່ຍໃຊ້ອໍານາດເຖື່ອນ

ເພື່ອຜົນປະໂຍດສ່ວນຕົວໃນໝູ່ຊົນຊາດຕ່າງໆທົ່ວປະເທດ ອີກດວ້ຽ

<u>ໃນການບໍຣິຫານແຂວງ</u>

ໃນສມັຍກອ່ນ ທີ່ໄດ້ເອກຣາດຈາກຝຣັ່ງເສສມາລາວເຮົາໄດ້ມີການຈັດຕັ້ງການບໍຣິຫານຫລາຽຂັ້ນຕອນທີ່ເໝາະສົມກັບເຂດເນື້ອທີ່ແລະປະຊາຊົນລາວໃນແຕ່ຣະທອ້ງຖິ່ນຂອງປະເທດແມ່ນປະກອບດວ້ຽຫລາຽແຂວງຫລາຽເມືອງຫລາຽ ຕາແສງແລະຫລາຽໝູ່ບາ້ນຕາມເຂດຕ່າງໆເພື່ອໃຫ້ການພັທນາເສຖກິດ -ສັງຄົມ ວັທນະທັມແລະການແຜ່ຂຍາຍໄປທົ່ວເຖິງປະຊາຊົນ -ດັ່ງນັ້ນຈຶ່ງເຫັນໄດ້ວ່າແຂວງ ແມ່ນເປັນບອ່ນສຳຄັນໃນການປົກຄອງແລະການບໍຣິຫານວຽກຂອງແຂວງ ໃນດາ້ນການເຜີຍແຜ່ຫລັກສິດເສຣີພາບປະຊາທິປະໄຕອັນແທ້ຈິງ ເຖິງເວລາ ແລ້ວພວກເຮົາທຸກຄົນຄວນຈະຕື່ນຕົວພາກັນລຸກຂື້ນແລ້ວຕອ້ງຮັບຮູ້ໃນການປົກຄອງ ພອ້ມກັບການໄຊ້ສິດເສຣີພາບປະຊາທິປະໄຕເພື່ອຄວາມກາ້ວໜ້າໄປສູ່ຄວາມໝັ້ນຄົງແລະຄວາມຖືກຕອ້ງປອງດອງຊາດແລະຄວາມສງົບສຸກຂອງສັງຄົມລາວເພື່ອຄວາມຢູ່ດີກິນດີອັນຊອບທັມ ຂອງປະຊາຊົນລາວຕຣອດໝົດທຸກໆຄົນໃນຊາດ ຕອ້ງປັບປຸງແລະເສີມຂຍາຍການປົກຄອງຂອງແຂວງໃຫ້ມີຄຸນຄາ່ສູງຂື້ນທາງດາ້ນເສຖກິດ -ສັງຄົມ -ວັທນະທັມແລະການເມືອງ ມີດັ່ງນີ້

ກ,ຕອ້ງສົ່ງຂາ້ຣາຊການຂອງ ຂບວນການລາວອິສຣະຈຳນວນນຶ່ງໃຫ້ກັບການບໍຣິຫານ ການປົກຄອງຂອງແຂວງ

ຂ,ຕອ້ງຊອກຊອ່ງທາງແລະແກ້ໄຂໃຫ້ມີການປອ່ນບັດເລືອກຕັ້ງເອົາຜູ້ບໍຣິຫານການປົກຄອງແຂວງຊຶ່ງມີຣັກສະນະດຽວກັບການເລືອກຕັ້ງຜູ້ແທນຣາສດອນທົ່ວປະເທດແລະໃຫ້ອະນຸຍາດໄດ້ແຕ່ປະຊາຊົນທີ່ຢູ່ໃນແຂວງນັ້ນເທົ້ານັ້ນ ມີສິດເຂົ້າສມັກຮັບເລືອກຕັ້ງແລະປອ່ນບັດເລືອກຕັ້ງໄດ້

ຄ,ຕອ້ງຈັດຕັ້ງແຕ່ຣະເຂດໃຫ້ມີຜູ້ຮັບຜິດຊອບພອ້ມທັງເປັນທີ່ສຶກສາ ນຶ່ງທາ່ນໃນເຂດເລືອກຕັ້ງຕ່າງໆ ພາຽໃນແຂວງນັ້ນ

ງ,ຕ້ອງປັບປຸງແກ້ໄຂກົດໝາຽການເລືອກຕັ້ງໃຫ້ເໝາະສົມກັບແຂວງໂດຍແນໃສ່ການສາ້ງສິດເສຣີພາບປະຊາທິປະໄຕອັນແທ້ຈິງ

ຈ, ຕອ້ງຈັດແບ່ງເຂດຕ່າງໆ ຕາມທີ່ເໝາະສົມ ໃນການພັທນາຊັ່ນ

1- ເຂດກະສິກັມ

2- ເຂດສາ້ງຕັ້ງບາ້ນເຮືອນ

3- ເຂດອຸດສາຫະກັມ

4- ເຂດປ່າສງວນ

5- ເຂດຊຸມຊົນຮະປະທານ

1/ ຕອ້ງຈັດຕັ້ງຮູບການ ໂຄງຮ່າງຂອງແຂວງຂຶ້ນໃໝ່ດວ້ຽການຮັບຮູ້ເຫັນດີ ຢ່າງດີກ ລອ້ງບໍ່ໄດ້ ຈາກປະຊາຊົນໃນແຂວງນັ້ນ ແບບປະຊາທິປະໄຕ

2/ ການຈັດຕັ້ງອົງການບໍຣິຫານແຂວງແມ່ນສືບຕໍ່ວຽກການ ມີດັ່ງນີ້

ກ,ຄະນະບໍຣິຫານແຂວງແມ່ນປະກອບດວ້ຽຜູ້ທີ່ໄດ້ຖືກຮັບການເລືອກຕັ້ງຈາກປະຊາຊົນ ໂດຽກົງຂອງແຂວງຕາມຈຳນວນຄະແນນສຽງປ່ອນບັດເລືອກຕັ້ງໃນແຂວງນັ້ນຝ່າຽ ທີ່ໄດ້ຮັບຄະແນນສຽງສູງກວ່າ ຕອ້ງປະກອບກັນຂື້ນເປັນຄະນະບໍຣິຫານແຂວງສວ່ນ ຝ່າຽທີ່ໄດ້ຄະແນນສຽງດຸດລົງມາແມ່ນປະກອບເປັນຝ່າຽຄາ້ນ

ຂ,ຕອ້ງໃຫ້ອຳນາດຄນະປຶກຄອງແຂວງຮ່າງກົດໝາຽຂອງແຂວງໃຫ້ປັບສະພາບ ເຂົ້າກັບທອ້ງຖິ່ນໃນການປະຕິບັດນະໂຍບາຽການເມືອງຂອງຣັຖບານຂອງປະເທດ

ຄ,ໃຫ້ຄນະປຶກຄອງແຂວງໄຊ້ຄວາມສາມາດຂອງຕົນ ຢູ່ໃນຂອບເຂດມີດັ່ງນີ້

1-ຕອ້ງວາງແຜນຜັງສາ້ງຕັ້ງເຂດເທດສະບານຂອງແຂວງແລະຕົວເມືອງຕ່າງໆ

2-ເຂດສາ້ງຕັ້ງບາ້ນເຮືອນ

3-ເຂດກະສິກັມປູກຝັງແລະລອ້ງສັດ

4-ເຂດອຸດສາຫະກັມ ບໍຣິສັດແຫລ່ງຜຣິດຕ່າງໆ

5-ເຂດຊຸມຊົນຮະປະທານ ເໝືອງຝາຽ

6-ເຂດການທອ້ງທຽ່ວ ແລະວັດຖຸບູຮານ ຂອງທັມມະຊາດ

7-ເຂດໄປສະນີແລະ ໂທຣະຄົມມະນາຄົມ

8-ເຂດອະນຸຮັກສິ່ງແວດລອ້ມທັມມະຊາດ

9-ເຂດປ່າສງວນ

10-ເຂດຮັກສາຄວາມສງົບຂອງແຂວງ

11-ເຂດປ່າໄມ້ແລະນໍ້າ

ກ,ການເຮັດງົບປະມານຂອງແຂວງ ຕອ້ງອີງໃສ່ໂຄງການແລະ ແຜນການພັທນາຂອງເຂດຕ່າງໆພາຽໃນແຂວງ

ຂ,ລາຽໄດ້ຕ່າງໆຂອງແຂວງ-ເມືອງແລະເຂດທອ້ງຖິ່ນແມ່ນມາຈາກການອູ້ມຊູ ທາງດາ້ນການເງິນຣັຖບານຂອງປະເທດແລະ ຊວ່ຽສາອາກອນຂອງປະຊາຊົນຂອງ

ຫ້າງຮ້ານແລະສາທະກັມຕ່າງໆພາຽໃນແຂວງຊຶ່ງຈຳພວກດັ້ງກ່າວຈະຕ້ອງຮັບເອົາ
ແຜນການທີ່ຣັຖບານມອບໃຫ້ລົງໄປປະຕິຮູບຕົວຈິງໃຫ້ເກີດດອກອອກຜົນກຸ້ມຄ່າ
ຄ,ແຂວງ-ເມືອງແລະເຂດທ້ອງຖິ່ນຕ່າງໆຈະຕ້ອງຮັບຜິດຊອບການຈັດຕັ້ງເບິ່ງແຍງ
ບອ່ນຝາກເດັກ ສ່ວນແຂວງເມືອງແລະເຂດທ້ອງຖິ່ນຈຳຕ້ອງມີຄວາມຮັບຜິດ
ຊອບສູງ-ໃນຂແນງບໍຣິຫານການເບິ່ງແຍງປະຊາຊົນໃຫ້ສົມກັບພາຣະ
ໜ້າທີ່ວຽກງານທີ່ຖືກມອບໝາຽໃຫ້
ງ,ເພື່ອຮັບປະກັນການເຂົ້າຮ່ວມຂອງປະຊາຊົນ ໂດຽກົງໃນການບໍຣິຫານແຂວງເມືອງ
ແລະເຂດທ້ອງຖິ່ນຕ່າງໆ ທາພັກປະຊາຊົນລາວອິສຣະ ພວກເຮົາຈະຕ້ອງແຈກຢາຽ
ການບໍຣິຫານເປັນຂັ້ນຕອນອອກໃຫ້ທາງອົງການບໍຣິຫານແຂວງ ເມືອງ
ແລະເຂດທ້ອງຖິ່ນຕ່າງໆ
ຈ,ຕ້ອງຮັບປະກັນໃຫ້ອຳນາດການປົກຄອງແຂວງ ເມືອງແລະທ້ອງຖິ່ນມີລາຽໄດ້
ສົມບູນກັບຄວາມຮຽກຮ້ອງຕ້ອງການຂອງແຜນການຂຍາຍເສຖກິດແລະແຜນ
ການບໍຣິການ ປະຊາຊົນຂອງຕົນທີ່ທາງຂບວນການລາວອິສຣະໄດ້ມອບໃຫ້ດວ້ຽ
ການໃຫ້ການອູ້ມຊູທາງດ້ານການເງິນພອ້ມຊວ່ຽສາອາກອນ ໂດຽກົງຂອງແຂວງ
ຈາກປະຊາຊົນ ເພື່ອປັບປຸງສົ່ງເສີມໃນການບໍຣິຫານແຂວງໃຫ້ເຂົ້າສູ່ຣະບອບ
ການປົກຄອງຣະບອບເສຣີປະຊາທິປະໄຕອັນແທ້ຈິງ ເພື່ອເຮັດໃຫ້ປະເທດຊາດ
ມີຄວາມກ້າວໜ້າແລະຮຸ່ງເຮືອງສີວິໄລ ທາງພັກປະຊາຊົນລາວອິສຣະຈຶ່ງຂໍຮອ້ງ
ມາຍັງອົງການຈັດຕັ້ງແລະອົງການປົກຄອງທຸກ ໆພັກການເມືອງ ພອ້ມດວ້ຽປະ
ຊາຊົນລາວທຸກຊົນຊັ້ນຊົນເຜົ່າຂອງລາວເຮົາ ພາຽໃນແລະນອກປະເທດຈົ່ງ
ໄດ້ໃຫ້ຄວາມຮວ່ມໄມ້ຮວ່ມມື ຮວ່ມສະຕິປັນຍາພອ້ມພຽງກັນສາ້ງສາ
ພັທນາປະເທດຊາດລາວເຮົາໃຫ້ຈະເຣີນກ້າວໜ້າຕໍ່ໆໄປ

<u>ໂຄງການສາທາຣະນະສຸກ</u>

ພື້ນຖານຮີດຄອງປະເພນີອັນດີງາມຕຣອດຊີວິດການເປັນຢູ່ຂອງລາວເຮົາກຳລັງຖືກແຊກ
ແຊງທຳລາຽຊັພຍາກອນທຳມະຊາດເກືອບໝົດຊີ້ນໄປ ໂດຽທາງກົງແລະທາງອອ້ມຢ່າງບໍ່
ຮູ້ຕົວປະຊາຊົນລາວໃນທຸກຊົນຊາດຊົນເຜົ່າເປັນຊົນຊັ້ນຊອກຢູ່ຫາກິນດວ້ຽຂອງທຳມະ
ຊາດແລະຕອ້ງການຄວາມສງົບສຸກສີ່ສັດສຸດຈະຣິດແລະມີຣະບຽບອັນດີງາມພອ້ມເຄົ້າ
ຣົບເຊື່ອຟັງຜູ້ເຖົ້າຜູ້ແກ່ແລະສະຖາບັນຊັ້ນສູງມີສາສນາພຸທແລະປະເພນີອັນດີງາມຕໍ່ມາ
ຍັງມີຜູ້ສວຽ ໂອກາດມານາບຄູ່ທຳລາຽຫລັບສູນບຸກຄົນລາວ

ເຮົາຜູ້ສະດາດຫລັກເພາລມໃນການຄົ້ນຄວ້າທີ່ໃຊ້ຊັພຍາກອນທໍາມະຊາດອັນດີງາມ
ຂອງລາວເຮົາ-ພວກເຮົາຄວນຈະຕຽມພອັ້ມແລະວາງໂຄງການໃໝ່ໃຫ້ມີດັ່ງນີ້
1-ຕອ້ງຈັດຣະບົບການເຜີຍແຜ່ສຸຂພາບໃຫ້ເຂົ້າໃຈ ໃນເນື້ອແທ້ຂອງຫລັກແພດ
ແລ້ວນໍາເອົາໄປແກ້ໄຂໃນຊີວິດປະຈໍາວັນໃຫ້ປະຊາຊົນໄດ້ຮັບຮູ້
2-ຕອ້ງອົບໂຮມປຸກຣະດົມໃຫ້ປະຊາຊົນທຸກຖອ້ນໜ້າເປັນຜູ້ຮູ້ຜູ້ຕື່ນແລະເບີກບານ
ໃຈແລ້ວກ້າຫານປະເຊີນໜ້າກັບບັນຫາແລ້ວມາແກ້ໄຂດວັຽວິທີອັນເໝາະສົມ
3-ຕອ້ງນໍາເອົາຫລັກແພດເຂົ້າໃນຫລັກສູດໃຫ້ມີການສິດສອນຢູ່ໃນໂຮງຣຽນ
ຕາມຣະຫລັບຊັ້ນແລະເປັນຂັ້ນຕອນເພື່ອສ້າງຜູ້ນໍາໃນອານາຄົດໃຫ້ເປັນຈິງ
4-ຕອ້ງສົ່ງເສີມໃຫ້ບັນດາຜູ້ນໍາແຕ່ຣະຂັ້ນແຕ່ຣະຄອບຄົວເປັນຕົວຢ່າງ
ໃຫ້ພວກໜຸ່ມນອ້ຍຊຶ່ງເຂົາເຈົ້າຈະໄຊ້ເປັນເຂັມທິບແລະໃຫ້ມີແສງສວ່າງ
ເພື່ອເຍືອງທາງນໍາພາຊີວິດແລະປະເທດຊາດບ້ານເມືອງຕໍ່ໄປ
5-ໃຫ້ລົບລ້າງຄວາມໂລບຄວາມໂກດຄວາມຫລົງແລະອິ່ມເພີ່ນຍໍໂຕເຫັນຜິດເປັນ
ຊອບໃຫ້ໝົດຊີ້ນໄປຈາກສວ່ນບຸກຄົນແລະສັງຄົມແລ້ວໃຫ້ມີສະຕິນະວັງຕົວຢູ່ສເມີ
6-ຕອ້ງປັບປຸງຊີວິດ ການເປັນຢູ່ ທົ່ວໄປຂອງປະຊາຊົນໃຫ້ດີຍິ່ງຂື້ນ
ທາງພັກປະຊາຊົນລາວອິສຣະ ຂອງພວກເຮົາ ຕອ້ງພາກັນເອົາໃຈໃສ່
ໃນການກໍ່ສ້າງທີ່ພັກພາອາໃສໃຫ້ເໝາະສົມກັບວຽກງານ
ແລະສະພາບຄອບຄົວ ຂອງປະຊາຊົນລາວທົ່ວໆໄປ
7-ໃຫ້ປັບປຸງ ສົ່ງເສີມແລະແກ້ໄຂສຸຂພາບ ຂອງປະຊາຊົນໃຫ້ດີຂື້ນ
8-ຕອ້ງຂຍາຍ ຄວາມຮັບຮູ້ ທາງດ້ານອະນາໄມ ໃນການ
ດໍາລົງຊີວິດ ຂອງປະຊາຊົນປະຈໍາວັນ ໃຫ້ທົ່ວເຖິງກັນ
ກ,ຕອ້ງມີການກໍ່ສ້າງຣະບົບນໍ້າກິນນໍ້າໄຊ້ໃຫ້ຖືກຕອ້ງໃນຫລັກອະນາໄມໂດຽ
ຕອ້ງຂຸດນໍ້າສ້າງ ສ້າງນໍ້າປະປາໃຫ້ທົ່ວທຸກເຂດແລະຕາມຊົນນະບົດຕ່າງໆ
ແລະໃນທຸກບ້ານເຮືອນທຸກຄອບຄົວຕອ້ງໃຫ້ມີສວ້ມອາບແລະສວ້ມຖ່ຽ
ໃຫ້ຖືກຕາມໃນຫລັກອະນາໄມຂອງແພດແລ້ວໃຫ້ນໍາເອົາຫລັກອະນາໄມ
ແພດເຂົ້າໃນຫລັກສູດຂອງການສິດສອນແລະເພື່ອເສີມສ້າງແນວ
ຄິດອະນາໄມໃຫ້ກັບປະຊາຊົນທຸກທອ້ງຖິ່ນ
ຂ,ຕອ້ງກໍ່ສ້າງແລະປັບປຸງຈັດຣະບົບການສຶກສາແພດ
ນາຍແພດພົນພະຍາບານແລະຜູ້ຊວ່ຽດູແລ

ຄ,ຕອ້ງປັບປຸງກໍ່ສາ້ງ ໂຮງຮຽນແພດໃຫ້ພຽງພໍກັບຄວາມຈຳເປັນແລະປັບປຸງກໍ່ສາ້ງ
ໂຮງພະຍາບານໃຫ້ທົ່ວເຖິງຕາມເມືອງນອ້ຽໃຫຍ່ແລະທອ້ງຖິ່ນຕາ່ງໆໃນປະເທດ
ງ,ຕອ້ງສາ້ງຣະບົບການພະຍາບານແລະແນວຄິດສັດຈະແພດໃຫ້ມີ
ມະນຸສທັນຂື້ນໃນທຸກສະຖາບັນຂອງການຈັດຕັ້ງແພດຕະສາດ
1-ພວກເຮົາໄດ້ມີນະ ໂຍບາຽຊວ່ຽເຫລືອລອ້ງດູເດັກຕາມ
ຄວາມຈຳເປັນແລະເໝາະສົມເທົ່າທີ່ຄວນ
2,ຕອ້ງໃຫ້ຄວາມສະດວກແລະອູ້ມຊູໃຫ້ແມ່ລູກອອ່ນ ໂດຽໃຫ້ໄດ້
ຮັບຮູ້ໃນການພັກພອ່ນຕາມເວລາອັນສົມຄວນແກ່ສຸຂພາບ
3,ຕອ້ງຈັດຕັ້ງຣະບົບການຝາກເດັກຕາມເຂດຕາ່ງໆຖາ້ພໍເປັນໄປໄດ້
4,ຮັບປະກັນໃນການເບິ່ງແຍງດູແລເດັກທາງດາ້ນສຸຂພາບແລະຣະບົບການສຶກສາ
5,ທາງພັກປະຊາຊົນລາວອິສຣະພວກເຮົາຕອ້ງປະກອບນັກວິຊາສະເພາະ
ທາງດາ້ນນີ້ ຢາ່ງເອົາໃຈໃສ່ແລະໃຫ້ເປັນທາງການ
6,ຕອ້ງອະນຸຍາດໃຫ້ເອກຊົນຕັ້ງບອ່ນຝາກເດັກ ໂດຽການຄວບຄຸມຈາກພັກປະຊາຊົນ
ລາວອິສຣະຂອງພວກເຮົາ ໂດຽກົງເພື່ອໃຫ້ແຜນການດັ່ງກາວນີ້ກາ້ວໜ້າຕໍ່ໄປນັ້ນກໍ່
ຕອ້ງອາໃສນັກວິຊາການແລະອຳນາດການປົກຄອງແຕ່ຣະຂັ້ນໃຫ້ເຫັນຄວາມສຳຄັນ
ໃນໜ້າທີ່-ທີ່ໄດ້ຖືກມອບໝາຽໃຫ້ເຫັນແກ່ຜົນປະ ໂຍດຂອງຊາດແລະຜົນປະ ໂຍດຂອງ
ປະຊາຊົນແລະໃຫ້ເຫັນແກ່ຄວາມເປັນເອກຣາຊແລະປະຊາທິປະໄຕ ໃນການຢູ່
ຮວ່ມກັນ ໂດຽສັນຕິວິທີ ແລະຕອ້ງໃຫ້ມີຄວາມເບີກບານພາກພູມໃຈ
ໃນຄວາມເປັນຊາດລາວ ຂອງພວກເຮົາຕໍ່ໆໄປ

ຈາກສູນກາງ ສັນພູໝອກ ທີ່ນະຄອນວຽງຈັນ

<u>ໃນນາມພັກປະຊາຊົນລາວອິສຣະ</u>

<u>ວັນທີ-25-5-00</u>